ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ການກໍານົດອັດຕາແລກປ່ຽນ



ໃນໄລຍະປັດຈຸບັນ ອັດຕາແລກປ່ຽນແມ່ນມີການຜັນຜວນຂຶ້ນ-ລົງ ອັນເນື່ອງມາຈາກປັດໄຈພາຍໃນ ແລະ ພາຍນອກ ສປປ ລາວ, ຄວາມຕ້ອງການເງິນຕາຕ່າງປະເທດຂອງສັງຄົມ, ການກໍານົດອັດຕາດອກເບ້ຍຂອງທະນາຄານ ທັງພາຍໃນ ແລະ ຕ່າງປະເທດ ແລະ ປັດໄຈອື່ນ ຊຶ່ງຕາມປົກກະຕິແລ້ວ ອັດຕາແລກປ່ຽນ ແມ່ນຄ່າຂອງສະກຸນເງິນໜຶ່ງທຽບໃສ່ຄ່າຂອງສະກຸນເງິນອື່ນ ເຊັ່ນ: ກີບ-ບາດ, ກີບ-ໂດລາສະຫະລັດ ໂດຍການກໍານົດອັດຕາແລກປ່ຽນໃນແຕ່ລະຄັ້ງ ຕ້ອງສອດຄ່ອງກັບກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໂດຍປະຕິບັດ ດັ່ງນີ້:

1. ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄົ້ນຄວ້າກໍານົດອັດຕາແລກປ່ຽນອ້າງອີງ ແລະ ແຈ້ງອັດຕາແລກປ່ຽນດັ່ງກ່າວ ຜ່ານເວັບໄຊຂອງທະນາຄານແຫ່ງ ສປປ ລາວ (www.bol.gov.la) ພາຍໃນເວລາ 08:10 ໂມງ ໃນຕອນເຊົ້າຂອງແຕ່ລະວັນລັດຖະການ ເພື່ອເປັນບ່ອນອີງໃຫ້ແກ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດ ກໍານົດອັດຕາແລກປ່ຽນຂອງຕົນ ຕາມຂອບເຂດທີ່ທະນາຄານແຫ່ງ ສປປ ລາວ ກໍານົດໃນແຕ່ລະໄລຍະ. ສໍາລັບການກໍານົດອັດຕາແລກປ່ຽນໃນວັນພັກລັດຖະການ ແມ່ນໃຫ້ຖືເອົາອັດຕາແລກປ່ຽນອ້າງອີງຂອງທະນາຄານແຫ່ງ ສປປ ລາວ ກໍານົດອອກໃນວັນສຸດທ້າຍ ກ່ອນວັນພັກລັດຖະການ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ;

2. ການກຳນົດອັດຕາແລກປ່ຽນຂອງທະນາຄານທຸລະກິດ ແມ່ນປະຕິບັດຕາມຂອບເຂດ ແລະ ຫຼັກການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ຄື:

- ກຳນົດອັດຕາແລກປ່ຽນສຳລັບການຊື້ ຫຼື ຂາຍເງິນກີບກັບເງິນໂດລາສະຫະລັດ ໃນຂອບເຂດບໍ່ເກີນ ± 4,50% ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາ ປະກາດອອກໃນແຕ່ລະວັນ ແລະ ສ່ວນຕ່າງລະຫວ່າງອັດຕາຊື້-ຂາຍ ບໍ່ເກີນ 1%;
- ກຳນົດໃຫ້ສ່ວນຕ່າງ ລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 1% ສຳລັບການແລກປ່ຽນເງິນກີບກັບເງິນບາດ, ເງິນຢວນ ແລະ ເງິນເອີໂຣ.

ການກຳນົດອັດຕາແລກປ່ຽນຕາມທີ່ໄດ້ກ່າວມາຂ້າງເທິງນັ້ນ ກໍເພື່ອເຮັດໃຫ້ການກຳນົດອັດຕາແລກປ່ຽນຂອງລະບົບທະນາຄານ ບໍ່ແຕກໂຕນ ຫຼື ຫຼຸດລົ່ນກັນຫຼາຍເກີນໄປ ແລະ ຢູ່ໃນຂອບເຂດທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

**ຂໍ້ມູນຈາກ:** - ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, 7 ກໍລະກົດ 2022;

- ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ ສະບັບເລກທີ 116/ທຫລ, ລົງວັນທີ 10 ກຸມພາ 2023.

**ໂດຍ: ພະແນກກົດໝາຍ, ຫ້ອງການທະນາຄານແຫ່ງ ສປປ ລາວ**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**